ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********◇********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ______ /ຫຄຊກລ.ຄສ
ນະຄອນຫລວງວຽງຈັນ, ວັນທີ: 09 DEC 2020

# ບົດບັນທຶກກອງປະຊຸມ

ກອງປະຊຸມກຸ່ມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນປະຈຳໄຕມາດ 04 ປີ 2020

## I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ:

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນທີ່ໄດ້ໄຂຂຶ້ນໃນເວລາ 09:00 ຫາ 12:00 ໃນວັນທີ 03 ທັນວາ 2020 ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ແລະ ມີຜູ້ເຂົ້າຮ່ວມຄື: ໜ່ວຍງານຄຸ້ມຄອງຂໍ້ມູນ ແລະ ໜ່ວຍງານກວດກູ້ ພ້ອມດ້ວຍວິຊາການຈາກຫ້ອງການ ຄຊກລ ແລະ ຈາກ 06 ອົງການມະນຸດສະທຳເຂົ້າຮ່ວມ ຈຳນວນທັງໝົດ 20 ທ່ານ.

## II ຈຸດປະສົງ:

ເພື່ອສືບຕໍ່ທົບທວນຄືນບັນຫາທີ່ຍັງຄ້າງຄາ, ການແກ້ໄຂຂໍ້ສະເໜີ ຈາກກອງປະຊຸມວິຊາການຄັ້ງວັນທີ 28 ກັນຍາ 2020 ທີ່ຜ່ານມາ, ປຶກສາຫາລືບັນຫາ, ຄວາມຄືບໜ້າການແກ້ໄຂຂໍ້ມູນທີ່ບໍ່ສົມບູນໃນຖານຂໍ້ມູນ, ສິ່ງທ້າທ້າຍໃນການຄຸ້ມຄອງຂໍ້ມູນຈາກອົງການປະຕິບັດງານຕ່າງໆ ໃນໄຕມາດ 4 ຂອງປີ 2020 ແລະ ພ້ອມທັງໃຫ້ແຕ່ລະອົງການມີຂໍ້ສະເໜີເພື່ອເຮັດໃຫ້ວຽກງານຄຸ້ມຄອງຂໍ້ມູນການແກ້ໄຂບັນຫາ ລບຕ ໃນ ສປປ ລາວ ໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ.

## III ເນື້ອໃນກອງປະຊຸມ:

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 09:00 ໂມງ ໂດຍການເປັນປະທານຂອງທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ. ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດ, ກອງປະຊຸມໄດ້ຮັບຊາບ ແລະ ປຶກສາຫາລືບັນດາບັນຫາດັ່ງລຸ່ມນີ້:

1. **ບັນຫາ ແລະ ສິ່ງທ້າທ້າຍໃນການຄຸ້ມຄອງຂໍ້ມູນຈາກອົງການປະຕິບັດງານຕ່າງໆ**
   - ໂປຣແກມຖານຂໍ້ມູນ IMSMA ໂຫຼດຊ້າ, ຫຼັງຈາກ Restore Last backup ວັນທີ 11 ພະຈິກ 2020
   - ການສະແດງຂໍ້ມູນໃນແຜນທີ່ Map ໃນໂປຣແກມຖານຂໍ້ມູນ IMSMA ບາງເທື່ອບໍ່ເຫັນຮູບຫຼາຍແຈ Polygon
   - ຂໍ້ມູນ TS ແລະ CHA ບາງບົດລາຍງານ ບໍ່ມີໃນ Dashboard
   - ການດຶງຂໍ້ມູນຈາກຖານຂໍ້ມູນ IMSMA ໄປໃຊ້ໃນ ໂປຣແກມ ArcGIS, ຂໍ້ມູນໄປບໍ່ໝົດ

2. ຂໍ້ສະເໜີຈາກອົງການປະຕິບັດງານຕ່າງໆ

- ການນຳໃຊ້ແບບຮ່າງບົດລາຍງານເກັບກຳຂໍ້ມູນພາກສະໜາມ ສະບັບໃໝ່, ຄຊກລ ຄວນແຈ້ງອົງການປະຕິບັດງານຮັບຮູ້ ແລະ ນຳໃຊ້ ເພື່ອໃຫ້ມັນກົງກັບບົດລາຍງານໃນຖານຂໍ້ມູນ
- ການປັບປຸງແບບຮ່າງບົດລາຍງານໃນຖານຂໍ້ມູນ, ຄວນມີການສະເໜີຈາກກອງປະຊຸມ ແລະ ຄຊກລ ຄວນປັບປຸງແບບມີວາລະເຊັ່ນ: ເປັນເດືອນ, ໄຕມາດ ຫຼື ອື່ນໆ ເພື່ອຄວາມເປັນລະບຽບໃນການຕິດຕາມ

## IV. ມະຕິກອງປະຊຸມ ເຫັນດີຮັບຮອງເອົາ:

ກອງປະຊຸມໄດ້ຕົກລົງເຫັນດີຮັບຮອງເອົາບັນດາບັນຫາ ດັ່ງລຸ່ມນີ້:

- ການຈັດໝວດຂອງລະເບີດໃນຖານຂໍ້ມູນ ເຊັ່ນ: ລະເບີດ "Cluster and Dispensers", "AN-M17 Cluster bomb" ແລະ "suu 30" ແມ່ນຢູ່ໃນໝວດລະເບີດລູກຫວ່ານ ໂດຍການຕົກລົງເຫັນດີຈາກກອງປະຊຸມວິຊາການກ່ຽວກັບການກວດກູ້ CL ແລະ ກອງປະຊຸມວິຊາການຄຸ້ມຄອງຂໍ້ມູນ.
- ການປັບປຸງແບບຮ່າງບົດລາຍງານໃນຖານຂໍ້ມູນ ແມ່ນໄດ້ຜ່ານກອງປະຊຸມ ແລະ ແລກປ່ຽນຂໍ້ຄິດເຫັນພາຍໃນແລ້ວ, ທຸກພາກສ່ວນມີສ່ວນຮ່ວມ.
- ການຮັບຮອງແບບຮ່າງບົດລາຍງານເກັບກຳຂໍ້ມູນພາກສະໜາມສະບັບໃໝ່ແມ່ນໃຫ້ຮັບຮອງໃນກອງປະຊຸມວິຊາການກ່ຽວກັບການກວດກູ້ CL.
- ບາງຂໍ້ມູນທີ່ບໍ່ສະແດງໃນ Dashboard, ໜ່ວຍງານຄຸ້ມຄອງຂໍ້ມູນ ຄຊກລ ຈະຕ້ອງເລັ່ງແກ້ໄຂ, ປັບປຸງໃຫ້ຄວາມກະຈ່າງແຈ້ງ, ຖືກຕ້ອງ ແລະ ຊັດເຈນໂດຍໄວ
- ການລາຍງານຂໍ້ມູນ ຕ້ອງເປັນລະບົບດຽວກັນ, ເປັນຖານຂໍ້ມູນອັນດຽວ ແລະ ຕ້ອງປະຕິບັດຕາມມາດຕະຖານແຫ່ງຊາດ.
- ໃຫ້ສືບຕໍ່ພົວພັນ ແລະ ປະສານງານກັນໃຫ້ດີກວ່າເກົ່າ.
- ໃຫ້ອົງການປະຕິບັດງານ ນຳໃຊ້ລະບົບຈຸດພິກັດ (Coordinate system) ເປັນ UTM, X/Y format
- ຮຽກຮ້ອງໃຫ້ອົງການປະຕິບັດງານ ເຮັດວຽກພົວພັນປະສານງານກັບ ຄຄກລ ຂັ້ນເມືອງ ແລະ ຂັ້ນແຂວງ, ຂາດເຫຼືອສິ່ງໃດ ແມ່ນຢາກໃຫ້ຊ່ວຍເຫຼືອ.
- ຖ້າວ່າອົງການປະຕິບັດງານ ພົບບັນຫາ ຫຼື ຂໍ້ຫຍຸ້ງຍາກອັນໃດ ທີ່ຕ້ອງການຢາກໃຫ້ ຄຊກລ ຮັບຊາບ ແລະ ແກ້ໄຂ ຫຼື ມີຫົວຂໍ້ທີ່ຈະນຳສະເໜີ ສາມາດຕິດຕໍ່ ແລະ ຮຽກຮ້ອງໃຫ້ຈັດກອງປະຊຸມສະເພາະໄດ້, ພວກເຮົາພ້ອມທີ່ຈະຮ່ວມມື.

ກອງປະຊຸມໄດ້ປິດລົງໃນເວລາ 12:00 ໂມງ ຂອງວັນທີ 03 ທັນວາ 2020.

| | |
|---|---|
| **ປະທານກອງປະຊຸມ** | **ໜ່ວຍງານຄຸ້ມຄອງຂໍ້ມູນ** |
| ບຸນເພັງ ສີສະຫວັດ | ທ.ຄຳຍຸກຸນ ສຸດທີວົງ |
| Mr.Bounpheng SISAWATH | |